ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຫ້ອງການ

ເລກທີ 1810 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 18 ກໍລະກົດ 2025

## ແຈ້ງການ

ຮຽນ : - ບັນດາທ່ານຫົວໜ້າຫ້ອງການກະຊວງ, ຫົວໜ້າຫ້ອງການອົງການທຽບເທົ່າອ້ອມຂ້າງສູນກາງ;

- ບັນດາທ່ານຫົວໜ້າໂຄງການ, ຫົວໜ້າແຜນງານ;
- ບັນດາທ່ານຜູ້ອຳນວຍການລັດວິສາຫະກິດ ແລະ ວິສາຫະກິດ ທີ່ນັບຖື.

ເລື່ອງ : ການປະສານສົມທົບ ແລະ ພົວພັນວຽກງານຕ່າງໆ ກ່ຽວກັບການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ການ ຕິດຕາມກວດກາຄວາມຄືບໜ້າຂອງໂຄງການ ແລະ ການຕິດຕາມການປະຕິບັດສັນຍາການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ.

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງການເງິນ ສະບັບເລກທີ 6118/ກງ, ລົງວັນທີ 10 ທັນວາ 2021;
- ອີງຕາມ ໜັງສືສະເໜີຂອງກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ສະບັບເລກທີ 07/ກປຈ, ລົງວັນທີ 08 ກໍລະກົດ 2025.

ຫ້ອງການກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບວ່າ: ເນື່ອງຈາກວ່າໃນປະຈຸບັນ ອີງໃສ່ການປັບປຸງການຈັດຕັ້ງຂອງວຽກງານຕ່າງໆ ຂອງກະຊວງການເງິນ ຊຶ່ງໄດ້ມີການເຄື່ອນຍ້າຍເອົາວຽກງານການຄຸ້ມຄອງຈັດຊື້-ຈັດຈ້າງດ້ວຍທຶນຂອງລັດທັງໝົດ ຈາກກົມຄຸ້ມຄອງຊັບສິນແຫ່ງລັດໃນໄລຍະກ່ອນ ໄປຢູ່ກັບ ກົມປະເມີນຜົນ ຂອງກະຊວງແຜນການ ແລະ ການລົງທຶນ, ຊຶ່ງຊື່ໃໝ່ແມ່ນ ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ, ກະຊວງການເງິນ ຈຶ່ງຂໍແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດດັ່ງນີ້ :

1. ການພົວພັນກ່ຽວກັບການສົ່ງເອກະສານ, ບັດເຊີນ, ວຽກງານທີ່ຕິດພັນກັບການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເລີ່ມແຕ່ເດືອນກໍລະກົດ 2025 ເປັນຕົ້ນໄປ ແມ່ນໃຫ້ພົວພັນຂຶ້ນກັບກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ;

2. ການເຊີນເຂົ້າຮ່ວມເປັນຄະນະກຳມະການເປີດຊອງປະມູນ, ການປະເມີນຄົ້ນຄວ້າເອກະສານລາຍງານການປະມູນ ແມ່ນພະແນກຄຸ້ມຄອງຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ກົມປະເມີນຜົນ ແລະ ຈັດຊື້-ຈັດຈ້າງ ເປັນຜູ້ສືບຕໍ່ເຂົ້າຮ່ວມ, ການເຂົ້າເປັນຄະນະກຳມະການກວດກາຄວາມຄືບໜ້າຂອງໂຄງການ, ການຕິດຕາມການປະຕິບັດສັນຍາຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ແມ່ນພະແນກຄຸ້ມຄອງການປະຕິບັດສັນຍາດ້ວຍທຶນຂອງລັດ ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ເປັນຜູ້ເຂົ້າຮ່ວມ;
3. ສະຖານທີ່ພົວພັນຫ້ອງການ ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ຕັ້ງຢູ່ ບ້ານ ສີຖານເໜືອ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ຊັ້ນ 4. ( ເບີໂທລະສັບ 021 213819 ).

ດັ່ງນັ້ນ, ຈຶ່ງຮຽນແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຕາມທາງຄວນດ້ວຍ.

ຫົວໜ້າຫ້ອງການ

ກະຊວງການເງິນ
ຫ້ອງການ

ສົມຈິດ ຄຳມຸງຄຸນ